ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຊຽງຂວາງ

ພະແນກກະສິກຳ ແລະ ປ່າໄມ້

ເລກທີ 2570 /ກປຂ

ຊຽງຂວາງ, ວັນທີ 07 ພະຈິກ 2024

# ແຈ້ງການ

ເຖິງ : ທ່ານ ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ 7 ເມືອງ; ຂະແໜງການ, ກອງ, ສູນ, ຜູ້ບໍລິຫານໂຄງການ, ຜູ້ປະສານງານໂຄງການ, ຜູ້ປະກອບການ, ຜູ້ດຳເນີນທຸກະກິດ, ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມ ທີ່ປິ່ນອ້ອມ ພະແນກກະສິກຳ ແລະ ປ່າໄມ້.

ເລື່ອງ: ຂໍການປະກອບສ່ວນ ເຂົ້າໃນ ກິດຈະກຳ ວາງສະແດງສິນຄ້າກະສິກຳ ແລະ ເວທີສົນທະນາກ່ຽວກັບການຜະລິດເຂົ້າໄກ່ນ້ອຍເປັນສິນຄ້າ; ໃນງານເທດສະການບຸນເຂົ້າໄກ່ນ້ອຍ ແລະ ສະເຫຼີມສະຫຼອງປີທ່ອງທ່ຽວລາວ 2024 ແຂວງຊຽງຂວາງ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ພະແນກກະສິກຳ ແລະ ປ່າໄມ້ ປະຈຳ ແຂວງຊຽງຂວາງ, ສະບັບເລກທີ 552/ຊຂ; ຊຽງຂວາງ, ວັນທີ 03 ສິງຫາ 2022;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຈັດງານເທດສະການບຸນເຂົ້າໄກ່ນ້ອຍ ແລະ ສະເຫຼີມສະຫຼອງປີທ່ອງທ່ຽວລາວ 2024 ແຂວງຊຽງຂວາງ, ສະບັບເລກທີ 839/ຊຂ; ຊຽງຂວາງ, ວັນທີ 31 ຕຸລາ 2024.

ພະແນກກະສິກຳ ແລະ ປ່າໄມ້ ແຂວງຊຽງຂວາງ ຂໍແຈ້ງມາຍັງ ທ່ານ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ 7 ເມືອງ, ຂະແໜງການ, ກອງ, ສູນ, ຜູ້ບໍລິຫານໂຄງການ, ຜູ້ປະສານງານໂຄງການ, ຜູ້ປະກອບການ, ຜູ້ດຳເນີນທຸລະກິດ, ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມ ທີ່ປິ່ນອ້ອມພະແນກກະສິກຳ ແລະ ປ່າໄມ້ ທົ່ວແຂວງຊຽງຂວາງ ຊາບວ່າ: ໃນລະຫວ່າງ ວັນທີ 25-30 ພະຈິກ 2024 ແຂວງຊຽງຂວາງຈະໄດ້ຈັດງານເທດສະການບຸນເຂົ້າໄກ່ນ້ອຍ ແລະ ສະເຫຼີມສະຫຼອງປີທ່ອງທ່ຽວລາວ 2024 ແຂວງຊຽງຂວາງ ຂຶ້ນ, ຢູ່ທີ່ ເດີ່ນຫໍວັດທະນາທຳແຂວງ; ໃນງານດັ່ງກ່າວພະແນກກະສິກຳ ແລະ ປ່າໄມ້ແຂວງ ໄດ້ຮັບຜິດຊອບ 2 ກິດຈະກຳຄື: ກິດຈະກຳ ວາງສະແດງສິນຄ້າກະສິກຳ ແລະ ເວທີສົນທະນາກ່ຽວກັບການຜະລິດເຂົ້າໄກ່ນ້ອຍເປັນສິນຄ້າ; ເພື່ອເປັນການ ໃຫ້ຄວາມຮ່ວມມື, ກະຕຸກຊຸກຍູ້ ແລະ ປະກອບສ່ວນເຂົ້າໃນກິດຈະກຳດັ່ງກ່າວ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຈຶ່ງໄດ້ແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ຂໍການຮ່ວມມື ໃນການຈັດ 2 ກິດຈະກຳດັ່ງກ່າວ.

ຫວັງຢ່າງຍິ່ງວ່າ ທ່ານ ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ 7 ເມືອງ, ຂະແໜງການ, ກອງ, ສູນ, ຜູ້ບໍລິຫານໂຄງການ, ຜູ້ປະສານງານໂຄງການ, ຜູ້ປະກອບການ, ຜູ້ດຳເນີນທຸລະກິດ, ກຸ່ມຜະລິດ, ສະຫະກອນ ແລະ ສະມາຄົມ ທີ່ປິ່ນອ້ອມ ພະແນກກະສິກຳ ແລະ ປ່າໄມ້ ທົ່ວແຂວງຊຽງຂວາງ ຈະໃຫ້ການຮ່ວມມື ແລະ ຄົ້ນຄວ້າພິຈາລະນາຕາມຄວາມເໝາະສົມດ້ວຍ.

ຫົວໜ້າພະແນກ

ພະແນກກະສິກຳ ແລະ ປ່າໄມ້ ແຂວງຊຽງຂວາງ

ສົມສະໜອນ ພົນລືຈັນ

*ຕິດຕໍ່ພົວພັນ:*

- *ທ່ານ ນາງ ພຸດສະດີ ສີພອງໄຊ 020 29214038*
- *ທ່ານ ຄຳປິວ ແກ້ວວິໄລ 020 22947622*

ສະແກນດ້ວຍ CamScanner